# ການຈັດຄວາມສຳຄັນ ຂອງໜີ້ສິນ:(Prioritizing Debt:)
## ຂ້າພະເຈົ້າ ຈະຈ່າຍໜີ້ ອັນໃດກ່ອນ?(Which bills do I pay first?)

### ບັນຫາກ່ຽວກັບຄເຣດິດ

ເກືອບທຸກຄົນ ໃນເວລາໃດ ຫລື ເວລານຶ່ງ ໄດ້ພົບກັບບັນຫາກ່ຽວກັບເຈົ້າໜີ້-ເຊັ່ນ, ພາສີ (IRS), ບໍຣິສັດ ບັດຄເຣດິດ ຫລື ໂຮງໝໍ. ມີຢູ່ຫລາຍເທື່ອ, ຂະນະທີ່ ບຸຄຄົນ ມີເງິນຈ່າຍໜີ້ບາງສ່ວນຂອງເຂົາ, ເຂົາບໍ່ມີພຽງພໍທີ່ຈະຈ່າຍໝົດທຸກອັນ. ບຸຄຄົນ ໃນສະພາບນີ້ ອາດພົບວ່າມັນເປັນສິ່ງທີ່ຍາກລຳບາກ ທີ່ຈະຮູ້ວ່າ ໜີ້ອັນໃດທີ່ຈະຕ້ອງຈ່າຍກ່ອນ.

ສິ່ງພິມນີ້ ຈະກຳໜົດຄວາມແຕກຕ່າງຂອງປະເພດໜີ້ສິນທົ່ວໄປ ທີ່ທ່ານອາດມີ ແລະ ຈະຊ່ອຍໃຫ້ທ່ານຈັດຄວາມສຳຄັນ ແລະ ຕັດສິນໃຈວ່າ ຈະຈ່າຍໜີ້ອັນໃດກ່ອນ. ກະຣຸນາ ຈົດບັນທຶກໄວ້ວ່າ ສິ່ງພິມນີ້ ໃຫ້ຄຳແນະນຳທົ່ວໄປເທົ່ານັ້ນ. ຖ້າທ່ານພົບກັບບັນຫາໜີ້ສິນທີ່ຮ້າຍແຮງ, ທ່ານຄວນປຶກສາກັບຊັພຍາກອນອື່ນໆ, ຮວມທັງ ທະນາຍຄວາມ. (ສຸດທ້າຍຂອງສິ່ງພິມ ປະກອບດ້ວຍຂໍ້ມູລ ທີ່ເປັນປໂຍດ ກ່ຽວກັບຊັພຍາກອນອື່ນໆໃນດ້ານນີ້.)

### ປະເພດຂອງເຈົ້າໜີ້

ເມື່ອມາເຖິງການທີ່ໃຊ້ ຊັພຍາກອນ ທີ່ມີຈຳກັດ, ຄວາມເປັນຈິງກໍຄື ພື້ນຖານ, ຫລື "ສິ່ງຈຳເປັນ", ຄວນຈະໃຫ້ຄວາມສຳຄັນ. ຕົວຢ່າງ, ບາງຄົນຈະເລືອກສິ່ງທີ່ສິນເຫດສົມຜົລທີ່ສຸດ ໃນການໃຊ້ເງິນດອລລາສຸດທ້າຍຂອງເຂົາ ຈ່າຍສຳຣັບອາຫານ ຫລື ທີ່ຢູ່ອາໃສ, ແທນທີ່ຈະເຄື່ອງທີ່ຫລູຫລາເຊັ່ນ ເຄື່ອງຄຳເຄື່ອງເພັດ.

ໃນການເພີ້ມເຕີມແນວຄິດຂອງຄວາມຈຳເປັນ, ມັນສາມາດ ຊ່ວຍເຫລືອໃນການຈັດຄວາມສຳຄັນຂອງໜີ້ສິນ ທີ່ຈະເຂົ້າໃຈປະເພດທີ່ແຕກຕ່າງຂອງໜີ້ສິນ, ແລະ ຂອງເຈົ້າໜີ້ ທີ່ມີຢູ່.

### <u>ເຈົ້າໜີ້ທີ່ບໍ່ມີການຄ້ຳປະກັນ ສູ້ກັບ ເຈົ້າໜີ້ທີ່ມີການຄ້ຳປະກັນ</u>

ເຈົ້າໜີ້ ຄືຄົນທີ່ທ່ານຕິດໜີ້. ເຈົ້າໜີ້ ສາມາດຈະເປັນໃຜກໍໄດ້-ລຳດັບຈາກ ຣັຖບາລ (IRS ທີ່ກ່ຽວຂ້ອງດ້ານພາສີ; ສານທ້ອງຖິ່ນ ທີ່ກ່ຽວຂ້ອງດ້ານການປັບໄໝຈະຣາຈອນ ຫລື ການຈອດຣົຖ); ບໍຣິສັດ ບັດຄເຣດິດ; ຮ້ານຄ້າ ທ້ອງຖິ່ນ (ຮ້ານຂາຍເຄື່ອງໃຊ້ໄຟຟ້າ); ຜູ້ໃຫ້ບໍຣິການກ້ານການແພດ(ທ່ານໝໍ, ໝໍປົວແຂ້ວ, ໂຮງໝໍ); ຫລື ອົງກອນຕິດຕາມເກັບໜີ້ ທີ່ເກັບໜີ້ ດັ້ງເດີມໃຫ້ອີກຜູ້ນຶ່ງ.

**ເຈົ້າໜີ້ ທີ່ບໍ່ມີການຄ້ຳປະກັນ** ຄືພວກເຈົ້າໜີ້ ທີ່ໃຫ້ທ່ານຢືມເງິນ ຫລື ໄດ້ຕົກລົງຂາຍຂອງໃຫ້ທ່ານບາງຢ່າງ ບົນພື້ນຖານ ຄຳສັນຍາ ຂອງທ່ານພຽງລຳພັງ ວ່າຈະຈ່າຍຄືນ ພາຍໃຕ້ເງື່ອນໄຂ ຫລື ສະພາບການບາງຢ່າງ.

**ເຈົ້າໜີ້ທີ່ມີການຄ້ຳປະກັນ** ຄືພວກເຈົ້າໜີ້ ທີ່ໄດ້ຕົກລົງຂາຍຂອງໃຫ້ທ່ານບາງຢ່າງ ຫລື ໃຫ້ທ່ານຢືມເງິນ ເພື່ອແລກປ່ຽນກັບຄຳສັນຍາຂອງທ່ານທີ່ຈະຈ່າຍຄືນ **ບວກກັບ**ຈັດຫາ "ຊັບສິນບັດຄ້ຳປະກັນ" ບາງຊະນິດ ມາລັບລອງ. ຊັບສິນບັດຄ້ຳປະກັນ ສາມາດເປັນສິ່ງໃດກໍໄດ້ ເຊັ່ນ ເຟີນິເຈີ, ຣົຖຂອງທ່ານ, ຫລື ບັນຊີທະນາຄານຂອງທ່ານ, ແລະ ສ່ວນຫລາຍ ຈະຮວມທັງ ຊັບສິນບັດທີ່ທ່ານໄດ້ຊື້. ດັ່ງນັ້ນ, ເມື່ອມີ ຊັບສິນບັດຄ້ຳປະກັນ ເຂົ້າມາກ່ຽວຂ້ອງ, ຝ່າຍເຈົ້າໜີ້ແມ່ນມີສິດ ເອົາ ຫລື ຍຶດຄອງ ຊັບສິນບັດຄ້ຳປະກັນ **ຖ້າ**(ແລະ **ຖ້າ ເທົ່ານັ້ນ**)ທ່ານຜິດ ເງື່ອນໄຂ ຂອງສັນຍາ (ຕົວຢ່າງ, ບໍ່ຈ່າຍໜີ້ ຕາມທີ່ໄດ້ກຳໜົດໄວ້).

## ການຍຶດເຮືອນທີ່ມັດຈຳໄວ້ ແລະ ການຂັບໄລ່ອອກໄປ

ການຍຶດເຮືອນທີ່ມັດຈຳໄວ້ ແລະ ການຂັບໄລ່ອອກໄປ ຄື ການຍົກຕົວຢ່າງ ແບບພິເສດສອງຢ່າງຂອງການເກັບໜີ້. ຖ້າທ່ານບໍ່ໄດ້ຈ່າຍຄ່າເຮືອນຂອງທ່ານ, ເຈົ້າໜີ້ ສາມາດທຳການຍຶດເຮືອນທີ່ທ່ານມັດຈຳໄວ້. ໝາຍຄວາມວ່າ ເຈົ້າໜີ້ ຈະສາມາດຂາຍເຮືອນ ແລະ ທ່ານຈະຕ້ອງຍ້າຍອອກ. ຄ້າຍຄືກັນກັບ, ເຈົ້າຂອງທີ່ດິນ ສາມາດ ຂັບໄລ່ທ່ານອອກໄປໄດ້ ຖ້າທ່ານບໍ່ຈ່າຍຄ່າເຊົ່າເຮືອນ ແລະ ຄຳໃຫ້ການຂອງທ່ານບໍ່ມີເຫດຜົລພຽງພໍ. ດັ່ງຕົວຢ່າງອີກອັນນຶ່ງ, ຖ້າມີບາງຄົນ ພະຍາຍາມທີ່ຈະຍຶດເຮືອນທີ່ມັດຈຳຂອງທ່ານ ຫລື ຂັບໄລ່ທ່ານອອກໄປ, ໃຫ້ທ່ານປຶກສາກັບທະນາຍຄວາມ.

## ການຈັດຄວາມສຳຄັນຂອງໜີ້ສິນ

ດັ່ງຫລັກຖານຈາກຂ້າງເທີງ, ປະເພດຂອງ ໜີ້ສິນ/ເຈົ້າໜີ້ ທີ່ບັລຍາຍມາ ສາມາດຊ່ວຍຕັດສິນວ່າ ໜີ້ສິນອັນໃດຄວນທີ່ຈະໃຫ້ຄວາມສຳຄັນກ່ອນໝູ່. ກຳໜົດ ຢ່າງງ່າຍໆ, ການຈ່າຍເງິນຕໍ່ເຈົ້າໜີ້ທີ່ມີຄ້ຳປະກັນ ໂດຍທົ່ວໄປ ຄວນໃຫ້ຄວາມສຳຄັນກວ່າ ເຈົ້າໜີ້ທີ່ບໍ່ມີຄ້ຳປະກັນ ໂດຍມີເຫດຜົລງ່າຍໆວ່າ ເຈົ້າໜີ້ທີ່ມີຄ້ຳປະກັນ ສາມາດຍຶດເອົາ ຊັບສິນບັດຂອງທ່ານໄປຈາກທ່ານຢ່າງງ່າຍໆ ແລະ ໄວກວ່າ ເພື່ອຊົດເຊີຍໜີ້ສິນ. ຫລາຍກວ່ານັ້ນ, ການຈ່າຍເງິນ ໃຫ້ແກ່ເຈົ້າໜີ້ ທີ່ມີການຄ້ຳປະກັນ ບາງຢ່າງ ຄວນໃຫ້ຄວາມສຳຄັນຫລາຍກວ່າ ເຈົ້າໜີ້ທີ່ມີການຄ້ຳປະກັນອື່ນ ບົນພື້ນຖານຂອງຊັບສິນບັດທີ່ຄ້ຳປະກັນ ຫລື ພົວພັນກັບການສ່ຽງ.

ຣາຍການທາງລຸ່ມນີ້ ພະຍາຍາມທີ່ຈະຮວບຮວມເອົາຄວາມຄິດເຫັນທີ່ໄດ້ສົນທະນາກັນຂ້າງເທີງນັ້ນມາສລູບການເຂົ້າເປັນວິທີການຈັດຄວາມສຳຄັນຂອງໜີ້ສິນ

## ຣາຍການ ໜີ້ສິນທີ່ຈັດວ່າສຳຄັນກວ່າໝູ່

**1. ຈ່າຍທີ່ຈຳເປັນ ສຳຣັບຄອບຄົວ ກ່ອນສເມີ.** ໂດຍປົກກະຕິ ນີ້ໝາຍເຖິງ ອາຫານ ແລະ ການໃຊ້ຈ່າຍດ້ານການແພດທີ່ເປັນອົງປະກອບສຳຄັນ. ທ່ານອາດຕ້ອງການຄວບຄຸມວິທີໃຊ້ຈ່າຍສິ່ງເຫລົ່ານີ້ໃຫ້ຢູ່ໃນຣະດັບຕ່ຳ.

**2. ຕໍ່ໄປ ຈ່າຍບິລທີ່ພົວພັນກັບຄ່າເຄຫະສຖານ.** ໃຫ້ຈ່າຍຄ່າເຮືອນ ຫລື ຄ່າເຊົ່າຕໍ່ໄປ ຖ້າທັງໝົດ ເປັນໄປໄດ້. ຖ້າທ່ານເປັນເຈົ້າຂອງເຮືອນ, ພາສີ ອະສັງຫາຣິມຊັບ ແລະ ປະກັນໄພ ຈະຕ້ອງຈ່າຍເຊັ່ນກັນ ນອກຈາກວ່າ ມັນໄດ້ຖືກຮວມຢູ່ໃນຣາຍການຈ່າຍຄ່າເຮືອນປະຈຳເດືອນ. ຄ້າຍຄືກັນກັບ, ຄ່າທຳນຽມຄອນໂດ ທຸກຢ່າງ ຫລື ຄ່າທີ່ດິນ ສຳຣັບເຮືອນ ທີ່ເຄື່ອນຍ້າຍໄດ້(mobile home) ການຈ່າຍຄວນຈະຖືວ່າຢູ່ໃນລຳດັບທີ່ສຳຄັນສູງ. ການທີ່ບໍ່ໄດ້ຈ່າຍຄ່າໜີ້ສິນເຫລົ່ານີ້ສາມາດນຳໄປສູ່ການ ສູນເສັຽເຮືອນຂອງທ່ານ.

ຖ້າທ່ານມີບັນຫາຮ້າຍແຮງ ທີ່ເຮັດໃຫ້ທ່ານຈະຍ້າຍໄປຢູ່ບ່ອນອື່ນທີ່ຣາຄາຖືກກວ່າ, ທ່ານອາດເລືອກທີ່ຈະຢຸດການຈ່າຍເງິນຄ່າເຮືອນ ຫລື ຄ່າເຊົ່າ. ຢ່າງເຫັນຊັດ, ພາຍໃຕ້ສະພາບການແບບນີ້ ຂໍແນະນຳຢ່າງຍິ່ງໃຫ້ປຶກສາກັບທະນາຍຄວາມ. ຢ່າງໃດກໍຕາມ, ຖ້າທ່ານເລືອກຈະເຮັດແບບນັ້ນ, ທ່ານບໍ່ຄວນໃຊ້ເງິນນັ້ນຈ່າຍໃຫ້ແກ່ໜີ້ອັນອື່ນ, ແຕ່ໃນທາງກົງກັນຂ້າມ ເກັບເງິນນັ້ນໄວ້ ເພື່ອໃຊ້ໃນການຍົກຍ້າຍ.

**3. ຈ່າຍໃນສິ່ງທີ່ທ່ານຕ້ອງຈ່າຍ ເພື່ອຮັກສາ ການບໍຣິການ ດ້ານສິ່ງທີ່ມີປໂຍດໃນການໃຊ້ສອຍທີ່ຈຳເປັນ** (ຄ່າໄຟ, ນ້ຳ, ແກັສ ແລະ ອື່ນໆ).

ເຖິງແມ່ນວ່າ ນີ້ບໍ່ໄດ້ກຳໜົດໃຫ້ຈ່າຍເຕັມສເມີໄປ (ເຊັ່ນ ເວລາຍາມໜາວ ການຕັດຂາດ ຢຸດຊົ່ວຄາວ-ໃຫ້ເບິ່ງສິ່ງພິມຂອງພວກເຮົາ "ສາທາຣະນູປະໂພຄ" "Public Utilities"), ການຈ່າຍອັນໃດກໍຕາມ ຖ້າຈຳເປັນຄວນຈະຈ່າຍ

ຍາມໃດ ກໍຕາມທີ່ເປັນໄປໄດ້. ການເຮັດວຽກໜັກເພື່ອທີ່ຈະຮັກສາເຮືອນຂອງທ່ານ ຫລື ອາພາທເມັນໄວ້ ແມ່ນບໍ່ສົມເຫດຜົລ ປານໃດ ຖ້າເຮືອນນັ້ນບໍ່ສາມາດຢູ່ໄດ້ ເພາະວ່າ ທ່ານບໍ່ມີນ້ຳ,ໄຟ, ແກັສ .

**4. ຈ່າຍຄ່າໜີ້ຣົຖ ຫລື ເຊົ່າຣົຖໃນລຳດັບຕໍ່ມາ ຖ້າທ່ານຈຳເປັນຕ້ອງມີຣົຖຂອງທ່ານ.** ຖ້າທ່ານຈຳເປັນຕ້ອງໃຊ້ຣົຖ ຂອງທ່ານເພື່ອຂັບໄປການ ຫລື ເພື່ອເປັນການຂົນສິ່ງທີ່ຈຳເປັນ, ປົກກະຕິ ທ່ານຕ້ອງຈ່າຍຄ່າໜີ້ຣົຖ ຫລື ໜີ້ເຊົ່າຣົຖ ໃນລຳດັບຕໍ່ມາ ຫລັງຈາກຄ່າ ອາຫານ, ຄ່າເຮືອນ, ຣາຍຈ່າຍດ້ານການແພດ, ແລະ ຄ່ານ້ຳຄ່າໄຟຄ່າແກັສ. ທ່ານອາດ ຈະຕ້ອງການຈ່າຍຄ່າຣົຖກ່ອນ ຖ້າວ່າຣົຖ ຄືສິ່ງຈຳເປັນທີ່ຈະຮັກສາວຽກການຂອງທ່ານໄວ້.

ຖ້າທ່ານຮັກສາຣົຖໄວ້, ສິ່ງສຳຄັນຄື ທ່ານຕ້ອງຈ່າຍຄ່າປະກັນໄພ ເຊັ່ນດຽວກັນ. ບໍ່ດັ່ງນັ້ນ, ເຈົ້າໜີ້ ອາດຈະຊື້ໃຫ້ທ່ານ ໂດຍ **<u>ແມ່ນທ່ານ</u>** ເປັນຄົນຈ່າຍ ຍິ່ງໄປກວ່ານັ້ນ ຈະແພງກວ່າ ປະກັນການຕຳກັນ ແລະ ປະກັນຄົນລັກ ຊຶ່ງອາດເຮັດໃຫ້ ການປ້ອງກັນທ່ານ **<u>ໜ້ອຍ</u>** ລົງຫລາຍ. (ໃນຣັຖ ວໍຊິງຕັນ, ມັນແມ່ນຜິດກົດໝາຍ ໃນການທີ່ບໍ່ມີປະກັນໄພຣົຖ ທີ່ຄຸ້ມ ຄອງໜີ້ສິນ.) ຖ້າທ່ານສາມາດເຮັດໄດ້ ໂດຍບໍ່ຕ້ອງມີຣົຖຂອງທ່ານ ຫລື ຣົຖຂອງທ່ານຄັນໃດຄັນນຶ່ງ, ທ່ານບໍ່ພຽງແຕ່ ປຢັດຄ່າຈ່າຍໜີ້ຣົຖເທົ່ານັ້ນ, ແຕ່ທ່ານຍັງ ປຢັດນ້ຳມັນ, ຄ່າສ້ອມແປງ, ແລະຄ່າປະກັນໄພອີກດ້ວຍ.

**5. ທ່ານຈະຕ້ອງຈ່າຍໜີ້ ຄ້ຳຈຸນເດັກ.** ໜີ້ສິນເຫລົ່ານີ້ ຈະບໍ່ໜີໄປໃສ ແລະ ສາມາດເກີດຜົລຮ້າຍແຮງໄດ້ ຖ້າວ່າບໍ່ ຈ່າຍ-ຮວມທັງການຕິດຄຸກ ສຳຣັບການບໍ່ຈ່າຍເງິນ.

**6. ໜີ້ພາສີຣາຍໄດ້ ກໍຢູ່ໃນລຳດັບທີ່ສຳຄັນເຊັ່ນກັນ.** ທ່ານຕ້ອງຈ່າຍຄ່າພາສີຣາຍໄດ້ທຸກຢ່າງທີ່ເປັນຂອງທ່ານ ທີ່ບໍ່ໄດ້ ຖືກຫັກອອກຈາກເງິນເດືອນຂອງທ່ານຢ່າງອັດຕະໂນມັດ. ທ່ານຕ້ອງຍື່ນເຮັດພາສີຣາຍໄດ້ຂອງຣັຖບາລກາງ, ເຖິງວ່າ ທ່ານຈະບໍ່ສາມາດຈັດຫາເງິນມາເສັຽສ່ວນທີ່ຄ້າງຢູ່ນັ້ນໄດ້ກໍຕາມ. ທາງຣັຖບາລ ມີສິດຫລາຍຢ່າງ ທີ່ທາງເຈົ້າໜີ້ອື່ນ ບໍ່ມີ, ໂດຍສະເພາະ ຖ້າທ່ານບໍ່ຍື່ນເຮັດພາສີຣາຍໄດ້. ຈຳໄວ້ວ່າ, ຖ້າຣາຍໄດ້ຂອງທ່ານຂາດຫາຍໄປ ຍ້ອນສະພາບການ ປ່ຽນແປງ, ຂໍ້ຜູກມັດກ່ຽວກັບພາສີຂອງທ່ານກໍຈະລົດລົງເຊັ່ນກັນ. ຈ່າຍ ແຕ່ສິ່ງທີ່ຈຳເປັນເທົ່ານັ້ນ.

(ຍິ່ງກວ່ານັ້ນ, ຖ້າທ່ານມີສ່ວນກ່ຽວຂ້ອງນຳການໂຕ້ຖຽງກັບທາງກົມພາສີອາກອນ (IRS), ທ່ານຄວນໂທຣຫາ ຄເລັຽ (CLEAR) ທີ່ 1-888-201-1014 ເພື່ອຄົ້ນຫາຣາຍຣະອຽດເພີ້ມເຕີມ ກ່ຽວກັບ ສິດທິຂອງທ່ານ ແລະ ຄລີນິກສຳຣັບ ຜູ້ເສັຽພາສີ ທີ່ມີຣາຍໄດ້ຕ່ຳໃນທ້ອງຖິ່ນ ຊຶ່ງອາດສາມາດຊ່ວຍທ່ານໄດ້.)

**7. ເງິນກູ້ ທີ່ບໍ່ມີຊັບສິນບັດຄ້ຳປະກັນ ແມ່ນຈັດຢູ່ໃນລຳດັບບໍ່ສຳຄັນ.** ໜີ້ ບັດຄເຣດິດ ສ່ວນຫລາຍ, ບິລ ຈາກ ທະນາຍ ຄວາມ, ທ່ານໝໍ ແລະ ຈາກໂຮງໝໍ ແລະ ໜີ້ສິນອື່ນໆ ຕໍ່ຜູ້ຊ່ຽວຊານວິຊາຊີບທັງຫລາຍ, ການເປີດບັນຊີກັບຮ້ານຄ້າ ແລະ ໜີ້ສິນທີ່ຄ້າຍຄືກັນ ແມ່ນຢູ່ໃນຈຳພວກລຳດັບບໍ່ສຳຄັນ. ທ່ານບໍ່ໄດ້ວາງມັດຈຳຊັບສິນບັດ ຄ້ຳປະກັນໃດໆສຳຣັບ ເງິນກູ້ເຫລົ່ານີ້, ແລະ ເກືອບບໍ່ມີຫຍັງທີ່ ເຈົ້າໜີ້ເຫລົ່ານີ້ ສາມາດເຮັດໃຫ້ທ່ານໄດ້ໃນເວລາຣະຍະສັ້ນ.

**8. ເງິນກູ້ ທີ່ມີພຽງ ເຄື່ອງເຮືອນເປັນສິນບັດຄ້ຳປະກັນ ແມ່ນຈັດຢູ່ໃນລຳດັບບໍ່ສຳຄັນເຊັ່ນກັນ.** ບາງໂອກາດ ທາງ ເຈົ້າໜີ້ ກຳໜົດໃຫ້ທ່ານ ເອົາສິ່ງຂອງໃນເຮືອນຂອງທ່ານບາງຢ່າງມາວາງເປັນສິນບັດຄ້ຳປະກັນໃນການກູ້ຢືມ . ຕາມທັມມະດາ ທ່ານຄວນປະຕິບັດຕໍ່ເງິນກູ້ນີ້ ເຊັ່ນດຽວກັນກັບໜີ້ສິນທີ່ບໍ່ໄດ້ຮັບປະກັນ ແລະ ຈັດຢູ່ໃນລຳດັບບໍ່ສຳຄັນ. ເຈົ້າໜີ້ ໜ້ອຍເທື່ອຈະຍຶດເອົາເຄື່ອງເຮືອນ ເພາະວ່າ ຄຸນຄ່າໃນຕລາດມັນມີນ້ອຍ, ມັນຍາກທີ່ຈະຍຶດເອົາໂດຍບໍ່ມີ ໝາຍສັ່ງຈາກສານ, ແລະ ມັນໃຊ້ເວລາ ແລະ ແພງ ໃນການທີ່ຈະໃຫ້ໝາຍສານເພື່ອຍຶດເອົາສິ່ງຂອງນີ້.

**9. ຢ່າໄດ້ຂື້ນລຳດັບຄວາມສຳຄັນຂອງຫນີ້ສິນ ໃນການຕອບສນອງຕໍ່ຄຳຂູ່ວ່າຈະຟ້ອງຂອງເຈົ້າຫນີ້.** ຄຳຂູ່ວ່າຈະຟ້ອງຫລາຍຄົນກໍບໍ່ໄດ້ຟ້ອງ. ເຖິງວ່າ ຖ້າເຈົ້າຫນີ້ຟ້ອງ, ມັນຕ້ອງໃຊ້ເວລາພໍສົມຄວນສຳຮັບຜູ້ຕາມເກັບເງິນຈະສາມາດມາເຖິງຊັບສິນຂອງທ່ານ, ບັນຊີທະນາຄານ, ຫລື ເງິນເດືອນ, ແລະ ຊັບສິນຫລາຍຢ່າງຂອງທ່ານອາດຖືກຍົກເວັ້ນ ຈາກການຖືກຍຶດ. ອີກດ້ານນຶ່ງ, ການທີ່ບໍ່ຈ່າຍຄ່າເຊົ່າ, ຄ່າຫນີ້ເຮືອນ, ແລະ ຫນີ້ຣົຖ ອາດເປັນຜົລໃຫ້ທ່ານສູນເສັຽເຮືອນ ຫລື ຣົຖ ທັນທີ. (ໃຫ້ເບິ່ງ ສິ່ງພິມຂອງພວກເຮົາ "*ສິດທິຂອງລູກຫນີ້ ໃນການຖືກຟ້ອງ* "ແລະ "*ວິທີ ຕອບໂຕ້ ການຟ້ອງສຳຮັບ ຜູ້ຕິດຕາມເກັບຫນີ້.* "")

**10. ຢ່າຈ່າຍ ເມື່ອທ່ານມີສິ່ງປ້ອງກັນດ້ານກົດຫມາຍທີ່ດີ ສຳຮັບ ການຈ່າຍຄືນ.** ຕົວຢ່າງ ບາງສ່ວນຂອງການປ້ອງກັນດ້ານກົດຫມາຍ ຄື ສິນຄ້າທີ່ຊື້ມາມີບ່ອນຕຳຫນິ, ຫລື ທາງເຈົ້າຫນີ້ ໄດ້ຮຽກຮ້ອງເອົາເງິນຫລາຍກວ່າຈຳນວນ ທີ່ເຂົາມີສິດໄດ້ຮັບ. ຖ້າທ່ານມີ ສິ່ງປ້ອງກັນດ້ານກົດຫມາຍ, ທ່ານຄວນໄດ້ຮັບ ຄຳແນະນຳດ້ານກົດຫມາຍ ເພື່ອຕັດສິນໃຈວ່າ ການປ້ອງກັນຂອງທ່ານຈະສຳເຣັດຜົລຫລືບໍ. ໃນການຈະປະເມີນຜົລ ທາງເລືອກເຫລົ່ານີ້, ຈົ່ງຈຳໄວ້ວ່າ ມັນເປັນອັນຕຣາຍຢ່າງຍິ່ງໃນການ ບໍ່ຈ່າຍຄ່າຫນີ້ເຮືອນ ຫລື ບໍ່ຈ່າຍຄ່າເຊົ່າ ໂດຍບໍ່ໄດ້ຮັບການແນະນຳດ້ານກົດຫມາຍ. ຢ່າງໃດກໍຕາມ, ສຳຮັບຫນີ້ສິນອື່ນໆທັງຫມົດ ທ່ານຄວນພິຈາຣະນາ ຕໍ່ສູ້ຄືນ ເມື່ອທ່ານມີສິ່ງປ້ອງກັນທີ່ມີເຫດຜົນ.

**11. ຄຳຕັດສິນຂອງສານ ທີ່ໃຫ້ທ່ານພ່າຍແພ້ ທ່ານຄວນຍອມຮັບຢ່າງຈິງຈັງ.** ຫລັງຈາກ ຜູ້ນຳເກັບຫນີ້ ໄດ້ຮັບ ຄຳຕັດສິນຂອງສານ, ຫນີ້ນັ້ນຄວນຈະມາຢູ່ໃນລຳດັບພິເສດ ຢູ່ສເມີ ເພາະວ່າ ທາງເຈົ້າຫນີ້ ສາມາດ ໃຊ້ຄຳຕັດສິນນັ້ນມາ ບັງຄັບ ໂດຍຂໍໃຫ້ສານຍຶດຊັບສິນຂອງທ່ານ, ຫລື ຍຶດເງິນເດືອນ ແລະ/ຫລື ບັນຊີທະນາຄານ ຂອງທ່ານ. ແຕ່ຢ່າງໃດກໍຕາມ, ຄວາມຮ້າຍແຮງ ຂອງການຄຸກຄາມ ກໍຂຶ້ນກັບກົດຫມາຍທີ່ນຳມາໃຊ້, ມູລຄ່າຂອງຊັບສິນຂອງທ່ານ, ແລະ ຣາຍໄດ້ຂອງທ່ານ. ຊັບສິນທັງຫມົດຂອງທ່ານ ແລະ ເງິນເດືອນຂອງທ່ານ ອາດຈະຖືກຄຸ້ມກັນ ພາຍໃຕ້ກົດຫມາຍຂອງຣັຖກໍອາດເປັນໄປໄດ້, ແລະ ຫລັງຈາກນັ້ນ ທ່ານຍັງຕ້ອງຈ່າຍຫນີ້ສິນນີ້ ຫລັງຈາກມີການເພີ້ມຄວາມກົດດັນຂອງຂໍ້ຕົກລົງເທົ່ານັ້ນ.

**12. ເງິນກູ້ສຳຮັບນັກສຶກສາ ຄື ຫນີ້ທີ່ຢູ່ໃນລຳດັບປານກາງຂອງຄວາມສຳຄັນ.** ເງິນກູ້ສຳຮັບນັກສຶກສາ ໂດຍທົ່ວໄປຄວນຈ່າຍກ່ອນຈຳພວກຫນີ້ທີ່ມີຄວາມສຳຄັນຫນ້ອຍ, ແຕ່ ຫລັງຈາກຫນີ້ທີ່ມີຄວາມສຳຄັນສູງກວ່າ. ສ່ວນຫລາຍ ເງິນກູ້ສຳຮັບນັກສຶກສາທີ່ບໍ່ຈ່າຍ ແມ່ນໄດ້ຮັບການສນັບສນູນຈາກຣັຖບານ ແລະ ກົດຫມາຍ ຣັຖບານກາງຂອງສະຫະຣັຖໃຫ້ການແກ້ໄຂ ເກັບກຳພິເສດ ຕໍ່ຕ້ານທ່ານ ຊຶ່ງເຈົ້າຫນີ້ຜູ້ອື່ນບໍ່ມີ, ເຊັ່ນ ການຍຶດເງິນພາສີທີ່ທ່ານໄດ້ຄືນ ແລະ ປະຕິເສດບໍ່ໃຫ້ທ່ານ ໄດ້ຮັບເງິນກູ້ສຳຮັບນັກສຶກສາແລະທຶນການສຶກສາອັນໃຫມ່. (ໃຫ້ເບິ່ງ ສິ່ງພິມຂອງພວກເຮົາ " *ຂ້າພະເຈົ້າຈະເຮັດຢ່າງໃດ ກ່ຽວກັບ ການຜິດສັນຍາ ເງິນກູ້ສຳຮັບນັກສຶກສາ?* ") **ສ**ຳຮັບເງິນກູ້ສຳຮັບນັກສຶກສາຂອງຣັຖບານບາງອັນ ຫລື ຫນີ້ສິນ, ທາງກະຊວງສຶກສາ ສາມາດພະຍາຍາມທີ່ຈະຍຶດຄອງຜົລທີ່ໄດ້ຮັບຂອງທ່ານຈາກຣັຖບານບາງສ່ວນ ເພື່ອທົດແທນຫນີ້. ຖ້າສິ່ງແບບນີ້ເກີດຂຶ້ນ, ທ່ານຄວນປຶກສາກັບທະນາຍຄວາມທັນທີ ເພາະມີກົດຣະບຽບກ່ຽວກັບການຈຳກັດ ຈຳນວນ ທີ່ອາດຍຶດຄອງໄດ້.

**13. ການພະຍາຍາມເກັບຫນີ້ ບໍ່ຄວນທີ່ຈະຍົກລຳດັບຄວາມສຳຄັນຂອງຫນີ້.** ໃຫ້ມີມາຣະຍາດກັບຜູ້ເກັບຫນີ້, ແຕ່ ໃຫ້ທ່ານເລືອກເອງ ກ່ຽວກັບຫນີ້ອັນໃດທີ່ຈະຈ່າຍ ບົນພື້ນຖານວ່າອັນໃດທີ່ດີທີ່ສຸດສຳຮັບຄອບຄົວຂອງທ່ານ. ຜູ້ເກັບຫນີ້ຄືຈະບໍ່ໃຫ້ຄຳແນະນຳທີ່ດີແກ່ທ່ານ ແລະ ອາດຈະພະຍາຍາມຢ່າງຍິ່ງທີ່ຈະໃຫ້ທ່ານຈ່າຍຫນີ້ໃຫ້ໄດ້ ຊຶ່ງຕາມຄວາມເປັນຈິງ ທ່ານຄວນຈະຈ່າຍສຸດທ້າຍ. ຍິ່ງກວ່ານັ້ນ, ທ່ານສາມາດ ຣະງັບການຕິດຕໍ່ຜູ້ເກັບຫນີ້ ແລະ ທ່ານເຮັດໃຫ້ຖືກຕ້ອງ

ຕາມກົດໝາຍ ໃນການຈັດການກັບການຂົ່ມຂູ່ຂອງການເກັບໜີ້. (ໃຫ້ເບິ່ງສິ່ງພິມຂອງພວກເຮົາ " *ສິດທິຂອງລູກໜີ້-ສຳນັກງານເກັບໜີ້.* ")

**14. ການຂົ່ມຂູ່ ຈະທຳລາຍປະວັດຄເຣດິດ ຂອງທ່ານ ບໍ່ຄວນຢ່າງເດັດຂາດທີ່ຈະຍົກລຳດັບຄວາມສຳຄັນຂອງໜີ້.** ໃນຫລາຍໆ ກໍຣະນີ, ເມື່ອຜູ້ເກັບໜີ້ ຂົ່ມຂູ່ທີ່ຈະຣາຍງານການທຳຜິດກົດໝາຍຂອງທ່ານຕໍ່ສຳນັກງານກ່ຽວກັບຄເຣດິດ, ເຈົ້າໜີ້ ໄດ້ໃຫ້ຂໍ້ມູລສະຖານະການຢ່າງຖືກຕ້ອງຕໍ່ທາງ ສຳນັກງານຄເຣດິດ ໄປແລ້ວ. ແລະ ຖ້າເຈົ້າໜີ້ຍັງບໍ່ໄດ້ຣາຍງານ ເທື່ອ, ຜູ້ເກັບໜີ້ ທີ່ຖືກຈ້າງໂດຍເຈົ້າໜີ້ ກໍຄົງຈະບໍ່ໄດ້ຣາຍງານເຊັ່ນກັນ. ຕາມທີ່ຈິງແລ້ວ, ຜູ້ໃຫ້ເງິນທ່ານຢືມທີ່ມີບ້ານມັດຈຳ, ເຈົ້າໜີ້ຄ່າຣົຖ, ແລະ ເຈົ້າໜີ້ໃຫຍ່ອື່ນໆ ຄົງຈະມີໂອກາດໄດ້ຣາຍງານການທຳຜິດກົດໝາຍຂອງທ່ານ (ໂດຍບໍ່ມີການຂູ່ ໃດໆ) ໄວກວ່າຜູ້ເກັບໜີ້ ທີ່ຂູ່ທ່ານກ່ຽວກັບ ປະວັດຄເຣດິດຂອງທ່ານ.

**15. ໜີ້ທີ່ມີຜູ້ເຊັນຄູ່ກັບທ່ານ ຄວນຈະຖືກປະຕິບັດເຊັ່ນດຽວກັບໜີ້ອື່ນໆຂອງທ່ານ.** ຖ້າທ່ານໄດ້ເອົາເຮືອນ ຫລື ຣົຖຂອງທ່ານເປັນສິ່ງຄ້ຳປະກັນໜານກູ້ຢືມ, ນັ້ນກໍແມ່ນໜີ້ສິນທີ່ຈັດຢູ່ໃນລຳດັບທີ່ສຳຄັນສຳຣັບທ່ານ ຖ້າວ່າຜູ້ເຊັນໜີ້ຄູ່ກັບທ່ານ ບໍ່ຈ່າຍໜີ້ຕາມກຳໜົດ. ຖ້າທ່ານບໍ່ໄດ້ເອົາຊັບສົມບັດດັ່ງກ່າວຄ້ຳປະກັນ, ໃຫ້ປະຕິບັດຕໍ່ໜີ້ທີ່ມີຜູ້ເຊັນຄູ່ໃນລຳດັບຕ່ຳລົງ. ຖ້າມີຜູ້ອື່ນເຊັນຄູ່ປະກັນໃຫ້ທ່ານ ແລະ ທ່ານບໍ່ສາມາດຈ່າຍໜີ້ໄດ້, ທ່ານຄວນບອກຕໍ່ຜູ້ເຊັນປະກັນທ່ານ ກ່ຽວກັບບັນຫາດ້ານການເງິນຂອງທ່ານ ເພື່ອວ່າລາວຈະໄດ້ຕັດສິນໃຈວ່າຈະເຮັດ ຢ່າງໃດກັບໜີ້ສິນນັ້ນ.

**16. ການກູ້ຢືມໃໝ່ ໜ້ອຍເທື່ອທີ່ສຸດທີ່ຈະແມ່ນທາງອອກ-ໃຫ້ຣະວັງ!** ທ່ານຄວນຣະວັງຢູ່ສເມີ ກ່ຽວກັບການກູ້ຢືມໃໝ່. ມັນສາມາດເປັນຣາຄາທີ່ແພງຫລາຍ ແລະ ມັນສາມາດເຮັດໃຫ້ເຈົ້າໜີ້ມີໂອກາດຍຶດຄອງຊັບສົມບັດອັນທີ່ ສຳຄັນຂອງທ່ານຫລາຍຂຶ້ນ. ຕົວຢ່າງ, ການກູ້ຢືມໃໝ ຂອງໜີ້ບັດຄເຣດິດທີ່ບໍ່ມີການຄ້ຳປະກັນໂດຍຜ່ານ ການຢືມທີ່ມີເຮືອນຂອງທ່ານຄ້ຳປະກັນ (ເຊັ່ນ ການຈຳນອງເທື່ອທີສອງ), ບັດນີ້ ທ່ານໄດ້ເອົາເຮືອນຂອງທ່ານເຂົ້າສ່ຽງແລ້ວ ຖ້າທ່ານຜິດສັນຍາໃນການໃຊ້ໜີ້ອັນໃໝ່ນີ້. ດັ່ງນັ້ນ, ສິ່ງທີ່ຈະແກ້ໄຂບັນຫາຣະຍະສັ້ນ ສາມາດນຳໄປສູ່ ບັນຫາຣະຍະຍາວ.(ໃຫ້ເບິ່ງ ສິ່ງພິມ ສູນກາງ ກົດໝາຍ ຜູ້ບໍຣິໂພກ ແຫ່ງຊາດ (National Consumer Law Center's (NCLC) publication ) " *ທ່ານຄວນຮູ້ຫຍັງແດ່ ກ່ຽວກັບການກູ້ຢືມໃໝ່* ")[1]

## ໝາຍຍຶດຊັບ

ໝາຍຍຶດຊັບ ຄືເຄື່ອງມືທີ່ມີກຳລັງສຳຣັບເຈົ້າໜີ້ ທີ່ໄດ້ຂໍຄຳຕັດສິນຈາກສານ ບັງຄັບໃຊ້ໃນການຈ່າຍໜີ້ . ໝາຍຍຶດຊັບ ອະນຸຍາດໃຫ້ເຈົ້າໜີ້ເຫລົ່ານີ້ ໄດ້ຮັບການຈ່າຍໂດຍກົງ ຈາກຣາຍໄດ້ ຫລື ຈາກບັນຊີທະນາຄານ ຂອງທ່ານ. ໃນຣັຖ ວໍຊິງຕັນ, ກົດໝາຍ ຄຸ້ມຄອງຣາຍໄດ້ ແລະ ຊັບສົມບັດສ່ວນຕົວ ບາງຊະນິດ ຈາກໝາຍຍຶດຊັບ. (ໃຫ້ເບິ່ງ ສິ່ງພິມຂອງພວກເຮົາ " *ວິທີ ຮຽກຮ້ອງການຍົກເວັ້ນ ຊັບສົມບັດສ່ວນຕົວ.* ") ເຊັ່ນໃນກໍຣະນີອື່ນ, ຖ້າຜູ້ໃດຜູ້ນຶ່ງ ພະຍາຍາມ

---

[1] ຂໍ້ຂຽນນີ້ໄດ້ຕັດຕອນມາ(ແກ້ໄຂ)ໂດຍໄດ້ຮັບອະນຸຍາດຈາກ ເນເຊີນນາລ ຄອນຊູມເມີ ລໍ ເຊັນເຕີ *ເຊີວາຍວິງ ແດຕ໌: ເອ ກາຍດ໌ ຟໍ ຄອນຊູມເມີ* (National Consumer Law Center (NCLC), *Surviving Debt: A Guide for Consumers* (1999 Third Edition). ຖ້າທ່ານມີຄວາມສົນໃຈທີ່ຈະໄດ້ຮັບ ສຳເນົາຂອງສິ່ງຕີພິມນີ້, ຫລື ອັນອື່ນ ທີ່ຈັດໃຫ້ໂດຍທາງ NCLC, ທ່ານສາມາດຕິດຕໍ່ພວກເຂົາໄດ້ ໂດຍຜ່ານທາງອິນເທີແນັຕ ແວັບໄຊທ໌ **@ www.consumerlaw.org** ຫລື ທາງໂທຣະສັບ/ໄປສະນີ ໄປທີ່ **National Consumer Law Center: 18 Tremont Street; Boston, MA; 02108-2336; ໂທຣະສັບ (617)-523-8089**.

ທີ່ຈະໃຊ້ໜາຍຍຶດຣາຍໄດ້ຂອງທ່ານ ຫລື ຍຶດຊັບສິນບັດ ຫລື ບັນຊີທະນາຄານຂອງທ່ານ, ທ່ານຄວນປຶກສາກັບທະນາຍຄວາມ.

## ຊັພຍາກອນອື່ນໆ

ຖ້າທ່ານມີຣາຍໄດ້ໜ້ອຍ, ການໃຫ້ຄຳແນະນຳເພີ້ມເຕີມດ້ານກົດໝາຍກໍມີໄວ້ບໍຣິການ ໂດຍໂທຣໄປທີ່ ໂຄງການຍຸຕິທັມ ຕາເວັນຕົກສຽງເໜືອ ເພື່ອປະສານງານ ການສຶກສາ ດ້ານກົດໝາຍ ແລະ ໂຄງການແນະໃຫ້ໄປຫາ (Northwest Justice Project's **C**oordinated **L**egal **E**ducation and **R**eferral (CLEAR) program)ທີ່ເບີ **1.888.201.1014.** ສິ່ງຕີພິມ ກ່ຽວກັບກົດໝາຍ ຊື່ງຄອບງຳ ຫືວຂໍ້ກ່ຽວກັບກົດໝາຍ ຢ່າງກວ້າງຂວາງ, ຣວມທັງບາງຢ່າງທີ່ໄດ້ອ້າງເຖີງຢູ່ຂ້າງເທີງ, ແມ່ນມີຢູ່ທາງ ອິນເທີແນັຕ ທີ່ www.washingtonlawhelp.org.

0110LA

---

**ສິ່ງຕີພິມນີ້ ໃຫ້ຂໍ້ມູລທົ່ວໄປ ກ່ຽວກັບສິດ ແລະ ຄວາມຮັບຜິດຊອບ ຂອງທ່ານ. ບໍ່ໄດ້ປະສົງຈະໃຊ້ແທນ ຄຳປຶກສາດ້ານກົດໝາຍໃດໆໂດຍສເພາະ. ຂໍ້ມູນນີ້ ແມ່ນປັດຈຸບັນ ດັ່ງວັນທີທີ່ພິມ, ເດືອນ ມີນາ 2006**

**© 2006 Northwest Justice Project — 1-888-201-1014, TTY 1-888-201-9737**
(ອະນຸຍາດໃຫ້ອັດສຳເນົາ ແລະ ແຈກຢາຍ ໄດ້ມອບໃຫ້ເຄືອຂ່າຍດ້ານຍຸຕິທັມ ເທົ່າທຽມກັນ ແລະ ຕໍ່ບຸກຄົນທີ່ຈະບໍ່ມີຈຸດປະສົງດ້ານການຄ້າ ເທົ່ານັ້ນ.)